**ມິຊຊາອາທິດທີ 15 ກຳນົດທຳມະດາ ປີ B**

**ວັນອາທິດທີ 15 ກໍລະກົດ 2018**



**ພຣະວໍລະສານໂດຍນັກບຸນມັກໂກ 6, 7-13**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງຮຽກພວກສາວົກສິບສອງຄົນແລ້ວສົ່ງພວກເຂົາໄປເປັນຄູ່ໆ. ພຣະອົງປະທານໃຫ້ພວກເຂົາມີອຳນາດຄວບຄຸມຈິດຊົ່ວຮ້າຍຕ່າງໆ ພ້ອມທັງສັ່ງບໍ່ໃຫ້ຖືຫຍັງໄປນຳທາງ. ເວັ້ນແຕ່ໄມ້ຄ້ອນເທົ້າເທົ່ານັ້ນ. ບໍ່ໃຫ້ຖືເຂົ້າຈີ່, ບໍ່ໃຫ້ຖືຖົງຍ່າມຫລືເງິນເໜັບແອວກໍຕາມ. ໃຫ້ຖືແຕ່ເກີບແລະບໍ່ໃຫ້ມີເສື້ອສຳລັບຖ່າຍໄປນຳ.

ພຣະອົງກ່າວກັບພວກເຂົາວ່າ: ເມື່ອເຮືອນໃດຕ້ອນຮັບພວກເຈົ້າ ກໍໃຫ້ພັກເຊົາຢູ່ເຮືອນນັ້ນຈົນກວ່າຈະອອກເດີນທາງໄປ. ຖ້າບ່ອນໃດເຂົາບໍ່ຕ້ອນຮັບແລະບໍ່ຍອມຟັງພວກເຈົ້າ ກໍໃຫ້ອອກໜີຈາກທີ່ນັ້ນດ້ວຍສັ່ງຂີ້ຝຸ່ນທີ່ຕິດຕີນພວກເຈົ້າເສຍ ແລະສະແດງຄວາມບໍ່ພໍໃຈຕໍ່ພວກເຂົາ.

ພວກສາວົກກໍອອກເດີນທາງໄປປ່າວປະກາດການເປັນທຸກກັບໃຈ. ພວກເຂົາໄດ້ຂັບໄລ່ຜີປີສາດມາກມາຍ ແລະປິ່ນປົວຄົນເຈັບໄຂ້ຢ່າງຫລວງຫລາຍດ້ວຍການທານ້ຳມັນ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມກ 6, 7-13**

ເມື່ອຟັງວາຈາຂອງພຣະເຈົ້າໃນວັນອາທິດນີ້, ຖ້າພວກເຮົາມີຄວາມຈຳດີພວກເຮົາຈະເຫັນວ່າ ສິ່ງທີ່ພຣະເຢຊູເຈົ້າສັ່ງໃຫ້ພວກສາວົກຂອງພຣະອົງກະທຳບົນເສັ້ນທາງແຫ່ງການເທດສະໜາສັ່ງສອນຕາມບ້ານຕາມເຮືອນຕ່າງໆນັ້ນ ລ້ວນແຕ່ເປັນສິ່ງທີ່ພຣະເຢຊູເຈົ້າເອງໄດ້ກະທຳມາກ່ອນແລ້ວ. ເຊັ່ນໃນອາທິດແລ້ວນີ້, ພຣະເຢຊູເຈົ້າໄດ້ກັບໄປບ້ານເກີດເມືອງນອນຂອງພຣະອົງທີ່ນາຊາແລັດ ພໍດີຖືກວັນຊາບາໂຕ, ພຣະອົງກໍໄດ້ເທດສະໜາສັ່ງສອນໃນໂຮງທັມ. ແລະຜົນທີ່ໄດ້ຮັບຄືພວກໄທບ້ານຂອງພຣະອົງບໍ່ເຊື່ອໃນຄຳເທດສອນຂອງພຣະອົງ.

ວັນນີ້, ພຣະເຢຊູເຈົ້າກໍສົ່ງພວກສາວົກຂອງພຣະອົງໄປເປັນຄູ່ໆ ເພື່ອສືບຕໍ່ພາລະກິດແຫ່ງການປະກາດພຣະວໍລະສານຂອງພຣະອົງ.

ສິ່ງທີ່ໜ້າຄິດໃນທີ່ນີ້ຄື ພຣະເຢຊູເຈົ້າສັ່ງໃຫ້ພວກສາວົກຂອງພຣະອົງບໍ່ໃຫ້ຖືຫຍັງໄປນຳ. ບໍ່ວ່າຈະເປັນສະບຽງເຂົ້າປາອາຫານ, ວັດຖຸເງິນຄຳ, ແມ່ນກະທັ້ງເຄື່ອງນຸ່ງກໍບໍ່ໃຫ້ຖືໄປນຳດ້ວຍ. ຍ້ອນຫຍັງ? ຖ້າພວກເຮົາມາສົມທຽບໃສ່ສະພາບສັງຄົມປັດຈຸບັນຂອງພວກເຮົາ ກໍຈະເຫັນວ່າເປັນໄປບໍ່ໄດ້. ເພາະທຸກສິ່ງຢ່າງແລະເປັນຕົ້ນການຄອງຊີບລ້ວນແຕ່ຕ້ອງໄດ້ໃຊ້ເງິນຄຳເພື່ອໃຊ້ຈ່າຍຊື້ສອຍ. ຖ້າພວກເຮົາບໍ່ຊອກຫາເຂົ້າປາອາຫານ, ເຄື່ອງນຸ່ງຂອງຖືທີ່ຈຳເປັນແລ້ວ ເຮັດແນວໃດພວກເຮົາຈຶ່ງສາມາດມີຊີວິດຢູ່ໄດ້?

ແນ່ນອນການຄອງຊີບເປັນສິ່ງຈຳເປັນ, ແຕ່ຖ້າພວກເຮົາມົວເມົາແຕ່ຊອກຫາວັດຖຸສິ່ງຂອງທີ່ເປັນຂອງໆໂລກແລ້ວ ເຮັດແນວໃດພວກເຮົາຈຶ່ງມີເວລາຄິດຫາສິ່ງທີ່ເປັນຂອງສະຫວັນຄືການປະກາດອານາຈັກຂອງພຣະເຈົ້າ?. ພໍ່ຄິດວ່າສິ່ງນີ້ອາດຈະເປັນເຫດຜົນທີ່ພຣະເຢຊູເຈົ້າຫ້າມບໍ່ໃຫ້ພວກສາວົກຂອງພຣະອົງສົນລະວົນນຳຊີວິດການເປັນຢູ່ປະຈຳວັນ. ເພື່ອພວກເຂົາຈະໄດ້ເອົາໃຈໃສ່ແຕ່ໃນວຽກງານອະພິບານ, ການປະກາດຂ່າວດີຂອງພຣະເຈົ້າໃຫ້ເພື່ອນພີ່ນ້ອງ.

ເຫດຜົນທີສອງຄືລູກສິດບໍ່ຮ່ອນລື່ນອາຈານ. ພຣະເຢຊູເຈົ້າເອງ, ຜູ້ເປັນອາຈານ ພຣະອົງໄດ້ຍອມສະລະທຸກຢ່າງດ້ວຍການຮັບເອົາສະພາບການເປັນມະນຸດເໝືອນກັບພວກເຮົາ ເພື່ອໃຫ້ພວກເຮົາໄດ້ຮູ້ເຖິງຄວາມຮັກຂອງພຣະບິດາເຈົ້າຜ່ານທາງຊີວິດແລະຄຳເທດສອນຂອງພຣະອົງ. ດັ່ງດຽວກັນ, ພວກສາວົກກໍຕ້ອງໄດ້ສະລະທຸກຢ່າງບໍ່ວ່າຈະເປັນຍົດສັກ, ວັດຖຸເງິນຄຳ ເພື່ອເປັນພິຍານເຖິງພຣະເຢຊູເຈົ້າຜູ້ໄດ້ສົ່ງພວກເຂົາໄປ.

ສ່ວນພວກເຮົາຜູ້ເປັນກຣິສຕັງເດ? ພວກເຮົາຜູ້ໄດ້ຖືກສົ່ງໄປເໝືອນດັ່ງພວກສາວົກເພື່ອເປັນພິຍານເຖິງພຣະເຢຊູເຈົ້າ, ເພື່ອປະກາດອານາຈັກຂອງພຣະອົງ ພວກເຮົາໄດ້ສະລະທຸກຢ່າງເພື່ອວຽກງານນີ້ບໍ? ຫລືພວກເຮົາຍັງສົນລະວົນນຳຊີວິດການເປັນຢູ່, ຄວາມຮັ່ງມີ, ຍົດຖາບັນດາສັກ ແລະພວກເຮົາລືມພຣະເຢຊູເຈົ້າໄປໃນຊີວິດປະຈຳວັນຂອງພວກເຮົາ. ບາງຄັ້ງ, ພວກເຮົາຍັງເປັນພິຍານເທັດໃນການທຳມາຫາກິນອີກດ້ວຍ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ ຊ່ວຍເຕືອນຈິດເຕືອນໃຈພວກເຮົາໃຫ້ຫັນມາຫາພຣະອົງ. ໃຫ້ຮູ້ຈັກຕິດໃຈນຳສິ່ງທີ່ເປັນຂອງສະຫວັນ. ເພື່ອພວກເຮົາຈະໄດ້ເປັນພິຍານເຖິງຜູ້ທີ່ສົ່ງພວກເຮົາໄປຄືອົງພຣະເຢຊູກຣິສໂຕເຈົ້າ, ຜູ້ໄດ້ສະລະທຸກຢ່າງ ແມ່ນກະທັ້ງຊີວິດຂອງພຣະອົງເອງເພື່ອຄວາມຮອດຂອງພວກເຮົາ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ